VATHANAVONG et al. (2021). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 7. Issue 2. July – December 2021. Page 29 - 42.

# ຄວາມທ້າທາຍໃນການພັດທະນາຫຼັກສູດຝຶກອົບຮົມເພື່ອສົ່ງເສີມຄວາມສາມາດ ໃນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ໃນສະຖານະການວິຖີຊີວິດແບບໃໝ່

**ທອງທ່ຽນ ວັດທະນາວົງ[1], ອະລິຍະພອນ ໂຄຣຸດະ[2], ໄພວັນ ວັດທະນາວົງ[3], ກິດສະໜາ ເສມທີຣັນ[4] ແລະ ກິໄລສອນ ອາໄສ[5]**

*ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

[1] ***ຊື່ຜູ້ຕິດຕໍ່ພົວພັນ:*** *ທອງທ່ຽນ ວັດທະນາວົງ, ຄະນະສຶກສາສາດ ມະຫາວິທະຍາໄລສູພານຸວົງ, ເບີໂທ ແລະ ເບີວອດແອັບ: +856 20 5429 9659, ອີເມວ: tthiane@gmail.com*

[1, 4, 5] *ນັກສຶກສາປະລິນຍາເອກ ສາຂາ ຫຼັກສູດ ແລະ ການສອນ ມະຫາວິທະຍາໄລຂອນແກ່ນ*

[2] *ອາຈານ ດຣ. ປະຈຳສາຂາຫຼັກສູດ ແລະ ການສອນ ມະຫາວິທະຍາໄລຂອນແກ່ນ*

[3] *ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ*

***ຂໍ້ມູນບົດຄວາມ:***

*ການສົ່ງບົດຄວາມ: 15 ກໍລະກົດ 2021*

*ປັບປຸງສຳເລັດ: 30 ກໍລະກົດ 2021*

*ການຕອບຮັບ: 13 ສິງຫາ 2021*

**ບົດຄັດຫຍໍ້**

ການຄົ້ນຄວ້າໃນຄັ້ງນີ້ມີຈຸດປະສົງ 1) ເພື່ອສຶກສາຄວາມຕ້ອງການຈຳເປັນໃນການຈັດການຮຽນສອນທັກສະແຫ່ງສະຕະວັດທີ 21; 2) ເພື່ອພັດທະນາຫຼັກສູດຝຶກອົບຮົມເພື່ອສົ່ງເສີມຄວາມສາມາດໃນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ແລະ 3) ເພື່ອປະເມີນປະສິດທິຜົນຂອງຫຼັກສູດຝຶກອົບຮົມໃນດ້ານຄວາມຮູ້ຄວາມເຂົ້າໃຈກ່ຽວກັບການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21, ຄວາມສາມາດໃນການອອກແບບການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ແລະ ຄວາມເພິ່ງພໍໃຈຂອງຜູ້ເຂົ້າຝຶກອົບຮົມທີ່ມີຕໍ່ຫຼັກສູດຝຶກອົບຮົມ. ຂະບວນການພັດທະນາຫຼັກສູດແບ່ງອອກເປັນ 3 ໄລຍະ ໄດ້ແກ່: ໄລຍະທີ 1 ການສຶກສາຂໍ້ມູນພື້ນຖານ, ໄລຍະທີ 2 ການອອກແບບ ແລະ ພັດທະນາຄຸນນະພາບຫຼັກສູດ ແລະ ໄລຍະທີ 3 ການປະເມີນຜົນການໃຊ້ຫຼັກສູດ. ກຸ່ມຕົວຢ່າງເປັນອາຈານຈຳນວນ 167 ຄົນ ແລະ ນັກສຶກສາຈຳນວນ 327 ຄົນ ຈາກ 6 ຄະນະວິຊາໃນມະຫາວິທະຍາໄລສຸພານຸວົງ ໃນສົກສຶກສາ 2020 - 2021 ໂດຍໃຊ້ເທັກນິກການເລືອກແບບແບ່ງຊັ້ນ, ເຊິ່ງນຳໃຊ້ວິທີວິທະຍາການຄົ້ນຄວ້າແບບສຳຫຼວດ ເຊິ່ງເປັນການໃຊ້ລະ ບຽບວິທີການຄົ້ນຄວ້າແບບປະສົມປະສານດ້ວຍການອອກແບບການຄົ້ນຄວ້າແບບຮອງຮັບພາຍໃນທີ່ໃຊ້ວິທີການທາງດ້ານປະລິມານ ແລະ ເສີມດ້ວຍວິທີການທາງດ້ານຄຸນນະພາບ. ເຄື່ອງມືທີ່ໃຊ້ເປັນແບບສອບຖາມ ແລະ ແບບສຳພາດທີ່ມີໂຄງສ້າງ. ສະຖິຕິທີ່ໃຊ້ໄດ້ແກ່: ເປີເຊັນ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ, ດັດສະນີຄວາມຕ້ອງການຈຳເປັນ, ຄ່າທົດສອບທີແບບ dependent sample t-test. ຜົນການຄົ້ນຄວ້າພົບວ່າ:

1. ສະພາບຄວາມຕ້ອງການຈຳເປັນໃນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ຢູ່ໃນລະດັບຫຼາຍ
2. ຫຼັກສູດຝຶກອົບຮົມທີ່ພັດທະນາຂຶ້ນມີຄວາມສອດຄ່ອງ ແລະ ເໝາະສົມສາມາດນຳໄປໃຊ້ໃນການຝຶກອົບຮົມໄດ້ຈິງ
3. ປະສິດທິຜົນຂອງຫຼັກສູດແມ່ນ ຜູ້ເຂົ້າຝຶກອົບຮົມມີຄວາມຮູ້ຄວາມເຂົ້າໃຈຫຼັງຝຶກອົບຮົມສູງກວ່າກ່ອນຝຶກອົບຮົມ, ຄວາມສາມາດໃນການອອກແບບການຈັດການຮຽນນການສອນທັກສະແຫ່ງສະຕະວັດທີ 21 ໃນລະດັບດີ ແລະ ມີຄວາມເພິ່ງພໍໃຈໃນລະດັບຫຼາຍ.

**ຄຳສັບສຳຄັນ**: *ທັກສະແຫ່ງສະຕະວັດທີ 21, ການຝຶກອົບຮົມ, ວິຖີຊີວິດແບບໃໝ່*

VATHANAVONG et al. (2021). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 7. Issue 2. July – December 2021. Page 29 - 42.

# Challenges in Developing Curriculum Training for Enhancing the Competencies in the 21st Century Skills-Based Learning in the New Normal Situations

**Thongthiane VATHANAVONG[1], Ariyabhorn KURUDA[2], Phaivanh VATHANAVONG[3]**
**Kritsana SEMHIRUN[4] and Kilaysone ASAI[5]**
*Faculty of Education, Souphanouvong University, LAO PDR*

[1]***Correspondence:*** *Thongthiane VATHANAVONG, Faculty of Education, Souphanouvong University, Tel & WhatsApp: +856 20 5429 9659, E-mail: tthiane@gmail.com*
*[1,4,5] Candidate Ph.D in Curriculum and Instructions, Khonkaen University, THAILAND*
*[2] Teacher Dr. at Curriculum and Instructions program, Khonkaen University, THAILAND*
*[3] Lecturer at Faculty of Education Souphanouvong University, LAO PDR*

*Article Info:*
*Submitted: Jul 15, 2021*
*Revised: Jul 30, 2021*
*Accepted: Aug 13, 2021*

**Abstract**

The objectives of this study were: 1) conduct a needs assessment for training to improve competencies in 21st century competency-based learning in the new normal situations for instructors at Souphanouvong University; 2) develop training curricula to improve 21st century competency-based learning; and 3) evaluate the effectiveness of 21st century competency-based learning as follows: trainee performance, ability to design lesson plans, and trainee satisfaction. The training curriculum development process was conducted in three steps, including baseline data investigation, training curriculum design, training curriculum implementation, and training curriculum improvement.

The sample of the study included 167 lecturers and 327 students from 6 faculties of Souphanouvong University in academic years 2020-2021, who were selected by stratified random sampling. Mixed methods were used as the research methodology; an embedded design was developed by exploring quantitative methods and supplementing them with qualitative methods. The research instruments used for data collection were questionnaire and structured interviews. The statistics used included percentage, mean ($\bar{x}$), standard deviation (S.D) and Priority Needs Index Modified ($PNI_{Modified}$). The dependent samples t-test or paired samples t-test was used.

The research findings were as follows:

1. A needs assessment to promote 21st century skills based learning in the new normal situations, was at a high level.
2. Developed curriculum training is consistency and suitability can be used in training.

3. The effectiveness of curriculum training was like: Performance after training was higher than before training at .05 level with statistical significance, trainees ability to design lesson plans was at a good level; and trainees' satisfaction with training was at a very good level.

**Keyword:** *The 21st Century Skills-Based Learning, Training, New Normal*

## 1. ພາກສະເໜີ

ໃນການດຳລົງຊີວິດຂອງຄົນເຮົາໃນຍຸກປັດຈຸບັນມີການປ່ຽນແປງໄປຕາມກະແສຂອງສັງຄົມໃນຍຸກໂລກາວິວັດໂດຍມີເທັກໂນໂລຍີ ແລະ ນະວັດຕະກຳສະໄໝໃໝ່ເກີດຂຶ້ນຢ່າງວ່ອງໄວ ແລະ ຫຼາກຫຼາຍ ເຊິ່ງສົ່ງຜົນກະທົບໃນທາງກົງ ແລະ ທາງອ້ອມຕໍ່ການປ່ຽນແປງພຶດຕິກຳຂອງຄົນທີ່ຈຳເປັນຕ້ອງປ່ຽນແປງ ແລະ ປັບຕົວໃນການຮຽນຮູ້ເພື່ອການດຳລົງຊີວິດໃນສັງຄົມໃຫ້ທັນຕາມຍຸກສະໄໝຢ່າງມີປະສິດທິພາບ. ດັ່ງນັ້ນ, ການສຶກສານັບວ່າເປັນແນວທາງ ຫຼື ເຄື່ອງມືທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມສອດຄ່ອງກັບສະພາບຂອງສັງຄົມໃນປັດຈຸບັນ ແລະ ການພັດທະນາຄູຈຶ່ງເປັນລູກກະແຈອີກອໍໜຶ່ງໃນການພັດທະນາຄຸນນະພາບການສຶກສາ ສອດຄ່ອງກັບເປົ້າໝາຍຂອງວິໄສທັດ ແລະ ແຜນຍຸດທະສາດການພັດທະນາການສຶກສາເຖິງປີ 2030 ທີ່ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ

ປະຊາຊົນລາວ ໄດ້ລະບຸໄວ້ຄື: "ຮອດປີ 2030 ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້ ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ ສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້." ເພື່ອບັນລຸວິໄສທັດ ແລະ ແຜນຍຸດທະສາດດັ່ງກ່າວກະຊວງສຶກສາທິການ ແລະ ກິລາໄດ້ກຳນົດແຜນຈັດຕັ້ງປະຕິບັດການ 5 ປີ ແຕ່ປີ 2016 - 2020 ໂດຍກຳນົດພາລະກິດຫຼັກທີ່ກ່ຽວຂ້ອງຄື: ປັບປຸງຄຸນນະພາບຂອງສາມັນສຶກສາທັງໃນ ແລະ ນອກໂຮງຮຽນ ເພື່ອໃຫ້ຜູ້ຮຽນທຸກຄົນມີຄຸນສົມບັດ , ມີຄວາມຮູ້ ແລະ ຄວາມສາມາດເພື່ອສືບຕໍ່ຮຽນໃນສາຍວິຊາຊີບ ແລະ ສາຍການສຶກສາຊັ້ນສູງ; ປັບປຸງຄຸນນະພາບຂອງການກໍ່ສ້າງ ແລະ ຍົກລະດັບຄູແບບຮອບດ້ານດ້ວຍການເນັ້ນການຝຶກອົບຮົມຄູໃຫ້ມີຄຸນນະພາບ (ກະຊວງສຶກສາທິການ ແລະ ກິລາ, 2015).

ພາຍໃຕ້ການຊີ້ນຳ-ນຳພາຂອງ ກະຊວງສຶກສຶກສາທິການ ແລະ ກິລາ, ມະຫາວິທະຍາໄລສຸພານຸວົງ ໃນຖານະເປັນເສນາທິການ, ເປັນສະຖາບັນການສຶກສາຊັ້ນສູງຂອງລັດ, ເປັນສູນກາງການສຶກສາ ແລະ ສູນກາງວັດທະນະທຳແຫ່ງຊາດທີ່ດຳເນີນການຈັດການຮຽນການສອນໃນລະດັບປະລິນຍາຕີແຫ່ງທຳອິດໃນຂົງເຂດພາກເໜືອຂອງປະເທດລາວ ຈຶ່ງກຳນົດວິໄສທັດ "ລົງເລິກວິຊາສະເພາະ ພັດທະນາທ້ອງຖິ່ນ ກ້າວສູ່ມາດຕະຖານສາກົນ" ໝາຍຄວາມວ່ານັກສຶກສາທີ່ສຳເລັດການສຶກສາຕ້ອງມີຄວາມຮູ້ຄວາມສາມາດຢ່າງເລິກເຊິ່ງໃນວິຊາສະເພາະຢ່າງເຖິງຖອງ ຈຶ່ງຈະສາມາດໝູນໃຊ້ຄວາມຮູ້ຄວາມສາມາດທີ່ໄດ້ສະສົມມາໝູນໃຊ້ໃນການພັດທະນາທ້ອງຖິ່ນຂອງຕົນ ເພື່ອເປັນການປະກອບສ່ວນໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໂດຍສະເພາະແມ່ນການສ້າງຊັບພະຍາກອນມະນຸດທີ່ມີຄຸນນະພາບໃຫ້ແກ່ປະເທດຊາດ. ແຕ່ເມື່ອພິຈາລະນາສະພາບການຈັດການຮຽນການສອນຂອງອາຈານໂດຍທົ່ວໄປຍັງບໍ່ໄດ້ເນັ້ນໃຫ້ຜູ້ຮຽນພັດທະນາຂະບວນການຄິດ, ການວິເຄາະ ຫຼື ການສະແຫວງຫາຄວາມຮູ້ດ້ວຍຕົນເອງທີ່ເປັນທັກສະການຮຽນຮູ້ແຫ່ງສະຕະວັດທີ 21. ອາຈານສອນສ່ວນໃຫຍ່ຍັງເນັ້ນການບັນຍາຍໃຫ້ຄວາມຮູ້ແກ່ນັກສຶກສາ, ນັກສຶກສາຈຶ່ງຊິນເຄີຍກັບການຮັບຮູ້, ເຮັດຕາມຄຳສັ່ງ, ເຊື່ອຟັງ ແລະ ນັ່ງງຽບ; ຂະບວນການຮຽນການສອນ ຈຶ່ງເປັນລັກສະນະໜ້າເບື່ອໜ່າຍ ແລະ ເຮັດໃຫ້ນັກສຶກສາເກີດຄວາມກັງວົນ ແລະ ເປັນຫ່ວງຈາກຂະບວນການສອບເສັງເພື່ອໃຫ້ສຳເລັດການສຶກສາເທົ່ານັ້ນ (ມະຫາວິທະຍາໄລສຸພານຸວົງ, 2019). ເຊິ່ງສິ່ງຜົນຕໍ່ຜົນການຮຽນຂອງນັກສຶກສາບໍ່ບັນລຸຕາມຄາດໝາຍທີ່ກຳນົດໄວ້ ສອດຄ່ອງກັບລາຍງານຜົນການຄົ້ນຄວ້າກ່ຽວກັບສະພາບການ ແລະ ການພັດທະນາວິຊາຊີບໃນສະຕະວັດທີ 21 ຂອງສະຖາບັນການສຶກສາຊັ້ນສູງທົ່ວປະເທດ ພົບວ່າ: ຄວາມເຂົ້າໃຈຂອງຜູ້ບໍລິຫານ ແລະ ອາຈານໃນສະບັນການສຶກສາແຫ່ງຕ່າງໆ ຈຳນວນ 90% ຍັງມີຄວາມເຂົ້າໃຈຄາດເຄື່ອນກ່ຽວກັບການຈັດການຮຽນການສອນທັກສະໃນສະຕະວັດທີ 21 ໂດຍສະເພາະຄູຍັງຂາດທັກສະການຮ່ວມມືດ້ານການສອນ, ຂາດການປະສານງານແລກປ່ຽນບົດຮຽນ ແລະ ວາງແນວທາງດ້ານການຈັດການຮຽນການສອນຮ່ວມກັນ ເຮັດໃຫ້ການສອນໃນລາຍວິຊາຕ່າງໆ ເປັນໄປໃນທິດທາງທີ່ແຕກຕ່າງກັນ (ສູນວິໄຈການສຶກສາ ແລະ ກິລາ, 2014).

ຈາກການສຶກສາເອກະສານ ແລະ ງານຄົ້ນຄວ້າທີ່ກ່ຽວຂ້ອງປະສົມປະສານກັບຂໍ້ມູນທີ່ປະຈັກໃນປະສົບການຂອງຜູ້ຄົ້ນຄວ້າທີ່ເປັນອາຈານສອນໃນລະດັບມະຫາວິທະຍາໄລມາຫຼາຍກວ່າ 15 ປີ ຜ່ານມາ ຍອມຮັບວ່າທັກສະການຮຽນຮູ້ໃນສະຕະວັດທີ 21 ເປັນແນວທາງໃໝ່ທີ່ຄູຜູ້ສອນມີຄວາມຈຳເປັນຕ້ອງມີໃນຕົວຜູ້ສອນເອງ ເພາະທັກສະດັ່ງກ່າວເປັນທັກສະທີ່ສຳຄັນທັງຜູ້ສອນ ແລະ ຜູ້ຮຽນໃນຍຸກປັດຈຸບັນ ເນື່ອງຈາກວ່າການພັດທະນາຜູ້ຮຽນໃຫ້ສາມາດດຳລົງຊີວິດ ແລະ ຢືນຢູ່ໃນໂລກອະນະຄົດໄດ້ຢ່າງມີຄວາມສຸກທັງດ້ານກາດຳລົງຊີວິດ ແລະ ໜ້າທີ່ວຽກງານ, ສາມາດປັບຕົວໃຫ້ທ່ວງທັນກັບການປ່ຽນແປງໃນສະຕະວັດທີ 21 ນີ້ໄດ້. ອີກປະການໜຶ່ງການຈັດການຮຽນການສອນໃນສະຕະວັດທີ 21 ມຸ່ງເນັ້ນການຈັດການຮຽນການສອນຕາມສະພາບຈິງທີ່ເຊື່ອມໂຍງກັບສະຖານະການໃນຊີວິດປະຈຳວັນຂອງຜູ້ຮຽນ ຫຼື ສະຖານະການໃນໂລກຂອງຄວາມຈິງ ເພື່ອກຽມຕົວຜູ້ຮຽນໃຫ້ມີທັກສະໃນສະຕະວັດທີ 21 ທີ່ພ້ອມຈະເຮັດວຽກງານໃນອະນາຄົດ ເຊິ່ງມີຂອບຄວາມຄິດຢູ່ 2 ສ່ວນທີ່ສຳຄັນ ຄືສ່ວນທີ 1 ຜົນການຮຽນຮູ້ຂອງຜູ້ຮຽນ, ປະກອບດ້ວຍການຮຽນໃນເນື້ອໃນວິຊາຫຼັກທີ່ຕ້ອງມີຄວາມສາມາດໃນການອ່ານອອກ, ຂຽນໄດ້ ແລະ ຄິດຄຳນວນໄດ້; ການຮຽນຮູ້ດ້ານສິ່ງແວດລ້ອມຄືຜູ້ຮຽນມີທັກສະດ້ານນະວັດຕະກຳ, ທັກສະດ້ານຂໍ້ມູນຂ່າວສານ, ສື່ ແລະ ເທັກໂນໂລຍີ ແລະ ທັກສະດ້ານຊີວິດ ແລະ ການງານອາຊີບ. ສ່ວນທີ 2 ລະບົບການສະໜັບສະໜູນການຈັດການສຶກສາ ໄດ້ແກ່: ມາດຕະຖານ ແລະ ການປະເມີນຜົນ, ຫຼັກສູດ ແລະ ວິທີການສອນ, ການພັດທະນາວິຊາຊີບແກ່ຜູ້ສອນ ແລະ ຜູ້ບໍລິຫານ ແລະ ສະພາບແວດລ້ອມທາງດ້ານການຮຽນຮູ້, ເຊິ່ງພາບລວມຂອງການຈັດການສຶກສາໃນສະຕະວັດທີ 21 ເປັນຂະບວນການຈັດການ

ສຶກສາທີ່ມີຄວາມຜ່ອນສັ້ນຜ່ອນຍາວ, ສ້າງສັນ, ທ້າທາຍ ແລະ ສັບຊ້ອນ, ເປັນການສຶກສາທີ່ຈະເຮັດໃຫ້ໂລກເກີດການປ່ຽນແປງຢ່າງວ່ອງໄວເຕັມໄປດ້ວຍສິ່ງທ້າທາຍ, ບັນຫາ ລວມທັງໂອກາດ ແລະ ສິ່ງໃໝ່ໆ ທີ່ໜ້າຕື່ນເຕັ້ນ, ຫຼັກສູດການສຶກສາຄວນເປັນຫຼັກສູດທີ່ໃຫ້ນັກຮຽນກ່ຽວຂ້ອງກັບບັນຫາໃນໂລກຄວາມເປັນຈິງ, ເປັນປະເດັນທີ່ກ່ຽວຂ້ອງກັບມະນຸດ ແລະ ຄຳຖາມກ່ຽວກັບອະນາຄົດແນວວັດທະນະທຳ, ສັງຄົມ ແລະ ສາກົນ (ຈະຕຸພູມ ເຂດຈະຕຸຈັກ, ພສ.2562).

ຈາກສະພາບບັນຫາທີ່ກ່າວມາສະທ້ອນໃຫ້ເຫັນວ່າການແກ້ບັນຫານີ້ຄວນເລີ່ມຕົ້ນທີ່ຕົວຄູຜູ້ສອນເອງ ທີ່ຈຳເປັນຕ້ອງມີການຝຶກອົບຮົມໃຫ້ມີຄວາມເຂົ້າໃຈໃນຫຼັກການຢ່າງແທ້ຈິງ ເພາະການຝຶກອົບຮົມຍັງຄົງເປັນແນວທາງຍຸດທະສາດຢ່າງໜຶ່ງທີ່ຈະຊ່ວຍໃນການພັດທະນາທັກສະດ້ານການປະຕິບັດການສອນຂອງຄູໄດ້ ເນື່ອງຈາກວ່າເປັນຂະບວນການທີ່ໃຊ້ໄລຍະເວລາບໍ່ຫຼາຍ ແຕ່ຕ້ອງໃຊ້ວິທີການທີ່ເໝາະສົມ ຈຶ່ງຈະກໍ່ໃຫ້ເກີດຄວາມຮູ້, ທັກສະ ເພື່ອນຳໄປພັດທະນາຜູ້ຮຽນໃຫ້ມີປະສິດທິພາບໄດ້ (ສົນ ສູນກາງ, ພສ.2551). ແຕ່ການຝຶກອົບຮົມໃນສະຖານະການປັດຈຸບັນທີ່ໂລກພວມປະເຊີນໜ້າກັບການລະບາດຂອງພະຍາດໂຄໂລນາໄວລັດສາຍພັນໃໝ່ ຫຼື ໂຄວິດ 19 (COVID-19) ເຮັດໃຫ້ຫຼາຍສະຖາບັນການສຶກສາໃນທົ່ວໂລກຈຳເປັນຕ້ອງໄດ້ປ່ຽນແປງລະບົບການຈັດການຮຽນການສອນຢ່າງເລັ່ງດ່ວນ. ການແຜ່ລະບາດຂອງພະຍາດດັ່ງກ່າວບໍ່ພຽງແຕ່ກະທົບຕໍ່ການຈັດການຮຽນການສອນຂອງຄູເທົ່ານັ້ນ, ຫາກເຮົາຫວນຄືນພາບຄວາມຫຼັງກັບໄປເຖິງການຝຶກອົບຮົມຄູ ຫຼື ການພັດທະນາຄູທີ່ເຄີຍຈັດຂຶ້ນແບບພົບປະເຊີນໜ້າກັນ ມາຮອດມື້ນີ້ຫຼາຍສະຖາບັນການສຶກສາໃນທົ່ວປະເທດໄດ້ມີການເຝົ້າລະວັງ, ປະຕິບັດຕາມມາດຕະການການປ້ອງກັນໂລກລະບາດ ຕ້ອງໄດ້ປ່ຽນສະພາບການຝຶກອົບຮົມໃຫ້ເປັນແບບອອນລາຍທີ່ຕ້ອງຈັດສະພາບແວດລ້ອມການຝຶກອົບຮົມບໍ່ໃຫ້ຕ່າງຈາກການຈັດໃນສະພາບຈິງ. ແຕ່ການຈັດອອນລາຍນີ້ຍັງເປັນສິ່ງໃໝ່ ແລະ ເປັນສິ່ງທ້າທາຍສຳລັບອາຈານ ແລະ ສະພາບຕົວຈິງຂອງປະເທດລາວເຮົາ.

ດ້ວຍເຫດຜົນດັ່ງກ່າວ ຜູ້ຄົ້ນຄວ້າຈຶ່ງສົນໃຈສຶກສາຄວາມທ້າທາຍໃນການຝຶກອົບຮົມເພື່ອສົ່ງເສີມຄວາມສາມາດໃນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ໃນສະຖານະການວິຖີຊີວິດແບບໃໝ່ ສຳລັບອາຈານ ມະຫາວິທະຍາໄລສຸພານຸວົງ ໂດຍມີຈຸດປະສົງເພື່ອ:

1) ເພື່ອສຶກສາຄວາມຕ້ອງການຈຳເປັນໃນການຝຶກອົບຮົມກ່ຽວກັບຈັດການຮຽນສອນທັກສະແຫ່ງສະຕະວັດທີ 21;

2) ເພື່ອພັດທະນາຫຼັກສູດຝຶກອົບຮົມເພື່ອສົ່ງເສີມຄວາມສາມາດໃນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ແລະ

3) ເພື່ອປະເມີນປະສິດທິຜົນຂອງຫຼັກສູດຝຶກອົບຮົມໃນດ້ານ 3.1) ຄວາມຮູ້ຄວາມເຂົ້າໃຈກ່ຽວກັບການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21, 3.2) ຄວາມສາມາດໃນການອອກແບບການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ແລະ 3.3) ຄວາມເພິ່ງພໍໃຈຂອງຜູ້ເຂົ້າຝຶກອົບຮົມທີ່ມີຕໍ່ການຝຶກອົບຮົມ

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຄັ້ງນີ້ແມ່ນນຳໃຊ້ລະບຽບວິທີການຄົ້ນຄວ້າແບບປະສົມປະສານ (Mixed Methods Research) ທີ່ອອກແບບການຄົ້ນຄວ້າດ້ວຍວິທີຮອງຮັບພາຍໃນ (The Embedded Design) ດ້ວຍວິທີການທາງດ້ານປະລິມານ ແລະ ເສີມດ້ວຍວິທີການທາງດ້ານຄຸນນະພາບ (Creswell & Plano Clark, 2011) ເຊິ່ງແບ່ງຂັ້ນຕອນການດຳເນີນການອອກເປັນ 3 ໄລຍະ ໄດ້ແກ່: ໄລຍະທີ 1 ການສຶກສາຂໍ້ມູນພື້ນຖານ, ໄລຍະທີ 2 ການອອກແບບ ແລະ ພັດທະນາຄຸນນະພາບຫຼັກສູດ ແລະ ໄລຍະທີ 3 ການປະເມີນຜົນການໃຊ້ຫຼັກສູດ, ດັ່ງລາຍລະອຽດລຸ່ມນີ້:

### 2.1 ໄລຍະທີ 1 ການສຶກສາຂໍ້ມູນພື້ນຖານ:

ໃນຂັ້ນຕອນນີ້ເປັນການສຶກສາສະພາບຄວາມເປັນປັດຈຸບັນໃນການດຳເນີນການຈັດການຮຽນການສອນ ແລະ ຄວາມຕ້ອງການຈຳເປັນໃນການຝຶກອົບຮົມ ໂດຍວິທີການດັ່ງຕາຕະລາງທີ 1 ຕໍ່ໄປນີ້:

**ຈຸດປະສົງ:** ຈຸດປະສົງຂອງການສຶກສາໃນຂັ້ນຕອນນີ້

1). ເພື່ອສຶກສາຂໍ້ມູນດ້ານເອກະສານກ່ຽວກັບທິດສະດີ, ນະໂຍບາຍ ແລະ ງານຄົ້ນຄວ້າທີ່ກ່ຽວຂ້ອງກັບທັກສະການຈັດການຮຽນການສອນໃນສະຕະວັດທີ 21.

2). ເພື່ອສຶກສາສະພາບການຈັດການຮຽນການສອນ ແລະ ຄວາມຕ້ອງການຈຳເປັນໃນການຝຶກອົບຮົມທັກສະການຈັດການຮຽນການສອນໃນສະຕະວັດທີ 21.

**ວິທີການ:** ໃຊ້ວິທີການສຶກສາເອກະສານກ່ຽວກັບທິດສະດີ, ນະໂຍບາຍ ແລະ ການຄົ້ນຄວ້າທີ່ກ່ຽວຂ້ອງກັບທັກສະການຈັດການຮຽນການສອນໃນສະຕະວັດທີ 21 ແລະ ການສອບຖາມ.

**ກຸ່ມຕົວຢ່າງແບ່ງອອກເປັນ 2 ປະເພດ ຄືປະເພດທີ່ເປັນເອກະສານໄດ້ແກ່:** ເອກະສານ ແລະ ທິດສະດີກ່ຽວກັບທັກສະການຈັດການຮຽນການສອນໃນສະຕະວັດທີ 21, ວິໄສທັດ

ຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016 - 2020) ຂອງກະຊວງສຶກສາທິການ ແລະ ກິລາ ແລະ ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ III (2015 - 2020) ຂອງ ມະຫາວິທະຍາໄລສຸພານຸວົງ ແລະ ຕົວຢ່າງທີ່ເປັນອາຈານຈຳນວນ 167 ຄົນ ຈາກ 6 ຄະນະວິຊາ ໂດຍກຳນົດຂະໜາດຕົວຢ່າງຕາມສູດຂອງເຄຣຊີ ແລະ ມໍແກັນ ເຊິ່ງໃຊ້ວິທີການເລືອກແບບແບ່ງຊັ້ນ (Krejcie & Morgan, 1979. ອ້າງເຖິງໃນ ບຸນຊົມ ສີສະອາດ, ພສ 2553 ແລະ ຈັນທິມາ ແສງເລີດອຸໄທ, ພສ 2553).

**ເຄື່ອງມື ແລະ ການວິເຄາະຂໍ້ມູນ:**

ເຄື່ອງມືທີ່ໃຊ້ໃນການເກັບຮວບຮວມຂໍ້ມູນເປັນເອກະສານ ແລະ ແບບສອບຖາມ, ໂດຍແບບສອບຖາມເປັນຊະນິດແບບປະເມີນຄ່າ 5 ລະດັບທີ່ເປັນຮູບແບບການຕອບສະໜອງຄູ່ຂະໜານ (Dual-Response Format) ເຊິ່ງລະບຸສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນໃນການຝຶກອົບຮົມ ໂດຍມີລາຍການປະເມີນ 5 ດ້ານ ໄດ້ແກ່: ດ້ານວິທີການອອກແບບແຜນການຈັດການຮຽນການສອນ, ດ້ານການຈັດບັນຍາກາດໃນຫ້ອງຮຽນ, ດ້ານການອອກແບບກິດຈະກຳ ແລະ ການຈັດປະສົບການຮຽນຮູ້, ຄວາມຮັບຜິດຊອບຕໍ່ຄວາມກ້າວໜ້າໃນວິຊາຊີບ ແລະ ສັງຄົມ ແລະ ການສອດແຊກກ່ຽວກັບການອະນຸລັກຄ່ານິຍົມທີ່ດີຂອງສັງຄົມ ແລະ ວັດທະນະທຳໃນການຈັດການຮຽນການສອນ.

ການວິເຄາະຂໍ້ມູນໂດຍໃຊ້ສະຖິຕິພື້ນຖານ ໄດ້ແກ່: ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ແລະ ຄ່າດັດສະນີຄວາມຕ້ອງການຈຳເປັນ Priority Needs Index Modified: $PNI_{modified}$.

ຜູ້ຄົ້ນຄວ້າກຳນົດເກນໃນການແປຄວາມໝາຍຂອງແບບສອບຖາມ ດັ່ງນີ້:

ຄະແນນ 5 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນຢູ່ໃນລະດັບຫຼາຍທີ່ສຸດ.

ຄະແນນ 4 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນຢູ່ໃນລະດັບຫຼາຍ.

ຄະແນນ 3 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນຢູ່ໃນລະດັບປານກາງ.

ຄະແນນ 2 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນຢູ່ໃນລະດັບໜ້ອຍ.

ຄະແນນ 1 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນຢູ່ໃນລະດັບໜ້ອຍທີ່ສຸດ.

### 2.2 ໄລຍະທີ 2 ການອອກແບບ ແລະ ພັດທະນາຄຸນນະພາບຫຼັກສູດ:

ໄລຍະນີ້ເປັນການນຳເອົາຜົນການວິເຄາະຈາກໄລຍະທີ 1 ມາອອກແບບຫຼັກສູດຝຶກອົບຮົມ ແລ້ວຫາຄຸນນະພາບຫຼັກສູດຈາກການປະເມີນຂອງຜູ້ຊ່ຽວຊານ ດັ່ງຕາຕະລາງທີ 2 ລຸ່ມນີ້:

**ຈຸດປະສົງ:** ຈຸດປະສົງຂອງການສຶກສາໃນຂັ້ນຕອນນີ້

1). ເພື່ອອອກແບບຫຼັກສູດຝຶກອົບຮົມການຈັດການຮຽນການສອນທັກສະໃນສະຕະວັດທີ 21

2). ເພື່ອປະເມີນຄຸນນະພາບຂອງຫຼັກສູດຈາກຜູ້ຊ່ຽວຊານດ້ວຍການປະເມີນຄວາມສອດຄ່ອງ ແລະ ຄວາມເໝາະສົມຂອງຫຼັກສູດຝຶກອົບຮົມ

**ວິທີການ:** ດຳເນີນການຮ່າງຫຼັກສູດຝຶກອົບຮົມ ແລະ ດຳເນີນການປະເມີນຄວາມສອດຄ່ອງ ແລະ ຄວາມເໝາະສົມຂອງຫຼັກສູດຝຶກອົບຮົມ ແລະ ການຈັດປະຊຸມວິພາກຫຼັກສູດ (Focus Group Discussion)

**ກຸ່ມຕົວຢ່າງເປັນຜູ້ຊ່ຽວຊານຈຳນວນ 5 ທ່ານ ປະກອບດ້ວຍ:** ຜູ້ຊ່ຽວຊານດ້ານຫຼັກສູດ ແລະ ການສອນ 1 ທ່ານ. ຜູ້ຊ່ຽວຊານດ້ານການວັດ ແລະ ປະເມີນຜົນ 1 ທ່ານ ແລະ ອາຈານສອນທີ່ມີປະສົບການດ້ານການສອນບໍ່ຕ່ຳກວ່າ 5 ປີ ຈຳນວນ 3 ທ່ານ.

**ເຄື່ອງມື ແລະ ການວິເຄາະຂໍ້ມູນ:** ເຄື່ອງມືທີ່ໃຊ້ໃນການເກັບຮວບຮວມຂໍ້ມູນໄດ້ແກ່ ຫຼັກສູດຝຶກອົບຮົມ ແລະ ເອກະສານປະກອບຫຼັກສູດຝຶກອົບຮົມສະບັບຮ່າງ, ແບບປະເມີນຄວາມສອດຄ່ອງ ແລະ ປະເມີນຄວາມເໝາະສົມ.

ແບບປະເມີນຄວາມສອດຄ່ອງເປັນແບບປະເມີນທີ່ມີ 3 ຄ່າ ໄດ້ແກ່:

- ຄ່າ -1 ໝາຍເຖິງ ເນື້ອໃນທີ່ລະບຸບໍ່ສອດຄ່ອງກັບສິ່ງທີ່ປະເມີນ
- ຄ່າ 0 ໝາຍເຖິງ ບໍ່ແນ່ໃຈວ່າເນື້ອໃນທີ່ລະບຸສອດຄ່ອງກັບສິ່ງທີ່ປະເມີນ
- ຄ່າ +1 ໝາຍເຖິງ ເນື້ອໃນທີ່ລະບຸສອດຄ່ອງກັບສິ່ງທີ່ປະເມີນ

ແບບປະເມີນຄວາມເໝາະສົມສ້າງເປັນແບບປະເມີນຄ່າ 5 ລະດັບໄດ້ແກ່:

5 ໝາຍເຖິງສິ່ງທີ່ລະບຸມີຄວາມເໝາະສົມຫຼາຍທີ່ສຸດ

4 ໝາຍເຖິງສິ່ງທີ່ລະບຸມີຄວາມເໝາະສົມຫຼາຍ

3 ໝາຍເຖິງສິ່ງທີ່ລະບຸມີຄວາມເໝາະສົມປານກາງ

2 ໝາຍເຖິງສິ່ງທີ່ລະບຸມີຄວາມເໝາະສົມໜ້ອຍ

1 ໝາຍເຖິງສິ່ງທີ່ລະບຸມີຄວາມເໝາະສົມໜ້ອຍທີ່ສຸດ

ການວິເຄາະຂໍ້ມູນດ້ວຍຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ຄ່າດັດສະນີຄວາມສອດຄ່ອງ (Index of Item-

Objective Congruence: IOC)

**2.3 ໄລຍະທີ 3 ການປະເມີນຜົນການໃຊ້ຫຼັກສູດ**

**ຈຸດປະສົງ:** ຈຸດປະສົງຂອງການສຶກສາໃນຂັ້ນຕອນນີ້ເພື່ອປະເມີນຜົນການໃຊ້ຫຼັກສູດຝຶກອົບຮົມ ໃນດ້ານ:

1) ຄວາມຮູ້ຄວາມເຂົ້າໃຈກ່ຽວກັບທັກສະແຫ່ງສະຕະວັດທີ 21

2) ຄວາມສາມາດໃນການອອກແບບແຜນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ແລະ

3) ຄວາມເພິ່ງພໍໃຈຂອງຜູ້ເຂົ້າຝຶກອົບຮົມທີ່ມີຕໍ່ການຝຶກອົບຮົມ

**ວິທີການ:** ນໍາໃຊ້ການອອກແບບການຄົ້ນຄວ້າແບບກຸ່ມດຽວມີການວັດຜົນກ່ອນ ແລະ ຫຼັງການຝຶກອົບຮົມ (The One-Group Pretest-Posttest Design) ໂດຍໃຊ້ວິທະຍາກອນນໍາສະເໜີ ແລະ ດໍາເນີນລາຍການທາງອອນລາຍ, ສ່ວນສໍາມະນາກອນແມ່ນດໍາເນີນການຢູ່ຫ້ອງປະຊຸມ ແລະ ໃຊ້ເວລາໃນການຝຶກອົບຮົມ 3 ວັນ ເທົ່າກັບ 18 ຊົ່ວໂມງ.

**ກຸ່ມຕົວຢ່າງ:** ເປັນອາຈານສອນຈາກ 6 ຄະນະວິຊາຂອງມະຫາວິທະຍາໄລສຸພານຸວົງໃນສົກສຶກສາ 2020 - 2021 ຈໍານວນ 60 ຄົນ ໂດຍການເລືອກແບບແບ່ງໂຄ້ຕ້າ (quota sampling) (Cohen; Manion & Morrison, 2007)

**ເຄື່ອງມື ແລະ ການວິເຄາະຂໍ້ມູນ:** ເຄື່ອງມືທີ່ໃຊ້ໃນການເກັບຮວບຮວມຂໍ້ມູນໄດ້ແກ່: ແບບທົດສອບ, ແບບປະເມີນແຜນການຈັດການຮຽນການສອນ ແລະ ແບບສອບຖາມປະເມີນຄວາມເພິ່ງພໍໃຈ

ການວິເຄາະຂໍ້ມູນດ້ວຍຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ທົດສອບຜົນການຝຶກອົບຮົມກ່ອນ ແລະ ຫຼັງຝຶກອົບຮົມດ້ວຍການທົດສອບຄ່າ ທີ (t-test) ແບບ dependent sample t-test.

**2.4 ເກນທີ່ໃຊ້ໃນການວິເຄາະຂໍ້ມູນ**

ຜູ້ຄົ້ນຄວ້າກໍານົດເກນໃນການສຶກສາສະພາບປັດຈຸບັນ ແລະ ປະເມີນຄວາມຕ້ອງການຈໍາເປັນດັ່ງນີ້:

ຄ່າສະເລ່ຍ 4.50 - 5.00 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈໍາເປັນຢູ່ໃນລະດັບຫຼາຍທີ່ສຸດ

ຄ່າສະເລ່ຍ 3.50 - 4.49 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈໍາເປັນຢູ່ໃນລະດັບຫຼາຍ

ຄ່າສະເລ່ຍ 2.50 - 3.49 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈໍາເປັນຢູ່ໃນລະດັບປານກາງ

ຄ່າສະເລ່ຍ 1.50 - 2.49 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈໍາເປັນຢູ່ໃນລະດັບໜ້ອຍ

ຄ່າສະເລ່ຍນ້ອຍກວ່າ 1.50 ໝາຍເຖິງສະພາບປັດຈຸບັນ ແລະ ຄວາມຕ້ອງການຈໍາເປັນຢູ່ໃນລະດັບໜ້ອຍທີ່ສຸດ

ແລະ ຄ່າດັດສະນີ $PNI_{Modified}$ >= 0.2 ຂຶ້ນໄປ (ສຸວິມົນ ວ່ອງວານິດ, ພສ. 2555).

**ຂອບຄວາມຄິດໃນການຄົ້ນຄວ້າ**

ຜູ້ຄົ້ນຄວ້າໄດ້ສຶກສາແນວຄິດ, ທິດສະດີ ແລະ ງານຄົ້ນຄວ້າທີ່ກ່ຽວຂ້ອງເພື່ອນໍາມາສະຫຼຸບເປັນຂອບຄວາມຄິດໃນການຄົ້ນຄວ້າ ດັ່ງນີ້:




**ແຜນວາດທີ 1 ຂອບຄວາມຄິດໃນການຄົ້ນຄວ້າ**

**3. ຜົນໄດ້ຮັບ**

3.1 ຜົນການສຶກສາຂໍ້ມູນພື້ນຖານກ່ຽວກັບການຈັດການຮຽນສອນ ພົບວ່າ: ສະພາບປັດຈຸບັນໃນການຈັດການຮຽນການສອນຂອງອາຈານໃນມະຫາວິທະຍາໄລສຸພານຸວົງ ໂດຍພາບລວມຢູ່ໃນລະດັບປານກາງ (ມີຄ່າສະເລ່ຍ 2.93). ເມື່ອພິຈາລະນາແຕ່ລະດ້ານເຫັນວ່າດ້ານທີ່ມີສະພາບປັດຈຸບັນຕໍ່າສຸດແມ່ນດ້ານການສອດແຊກກ່ຽວກັບການອະນຸລັກຄ່ານິຍົມທີ່ດີຂອງສັງຄົມ ແລະ ວັດທະນະທໍາໃນການຈັດການຮຽນການສອນ (ມີຄ່າສະເລ່ຍ 2.63). ໃນຂະນະທີ່ຄວາມຕ້ອງການຈໍາເປັນໃນການຝຶກອົບຮົມກ່ຽວກັບທັກສະແຫ່ງສະຕະວັດທີ 21 ໂດຍພາບລວມຢູ່ໃນລະ

ດັບຫຼາຍ (ມີຄ່າສະເລ່ຍ 4.34). ເມື່ອພິຈາລະນາແຕ່ລະດ້ານເຫັນວ່າທຸກດ້ານລ້ວນແຕ່ຢູ່ໃນລະດັບຫຼາຍ ແລະ ເມື່ອປະເມີນຄ່າດັດສະນີຄວາມຕ້ອງການຈໍາເປັນໂດຍພາບລວມພົບວ່າຢູ່ໃນລະດັບຕ້ອງການຫຼາຍ ມີຄ່າ $\mathbf{PNI}_{\mathbf{modified}}$ = 0.48 ເຊິ່ງມີຄ່າດັດສະນີຄວາມຕ້ອງການຈໍາເປັນຢູ່ລະຫວ່າງ 0.36 ເຖິງ 0.58. ເມື່ອຈັດລໍາດັບຄວາມສໍາຄັນຂອງຄວາມຕ້ອງການຈໍາເປັນຈາກຫຼາຍໄປຫາໜ້ອຍ 3 ລໍາດັບທໍາອິດ ໄດ້ແກ່: ລໍາດັບທີ 1 ແມ່ນດ້ານວິທີການອອກແບບແຜນການຈັດການຮຽນການສອນ, ຮອງລົງມາແມ່ນດ້ານການສອດແຊກກ່ຽວກັບການອະນຸລັກຄ່ານິຍົມທີ່ດີຂອງສັງຄົມ ແລະ ວັດທະນະທໍາໃນການຈັດການຮຽນການສອນ ແລະ ດ້ານການອອກແບບກິດຈະກໍາ ແລະ ການຈັດປະສົບການຮຽນຮູ້ຕາມລໍາດັບ (ສະແດງຂໍ້ມູນໃນຕາຕະລາງທີ 1)

ນອກຈາກນີ້, ຈາກການປະຊຸມວິພາກຫຼັກສູດຕາມຄໍາເຫັນຂອງຜູ້ຊ່ຽວຊານ, ສ່ວນໃຫຍ່ແມ່ນເຫັນດີ:

1. ສັງລວມເອົາເນື້ອໃນການສອດແຊກກ່ຽວກັບການອະນຸລັກຄ່ານິຍົມທີ່ດີຂອງສັງຄົມ ແລະ ວັດທະນະທໍາໃນການຈັດການຮຽນການສອນ ແລະ ຄວາມຮັບຜິດຊອບຕໍ່ຄວາມກ້າວໜ້າໃນວິຊາຊີບ ແລະ ສັງຄົມ ເຂົ້າເປັນເນື້ອໃນດຽວກັນ.

2. ສັງລວມເອົາແນວທາງ ແລະ ວິທະຍາການອອກແບບກິດຈະກໍາ ແລະ ການຈັດປະສົບການຮຽນຮູ້ທັກສະແຫ່ງສະຕະວັດທີ 21 ແລະ ການຈັດບັນຍາກາດໃນຫ້ອງຮຽນເປັນເນື້ອໃນດຽວກັນ

3.2 ຜົນການອອກແບບຫຼັກສູດຝຶກອົບຮົມເພື່ອສົ່ງເສີມຄວາມສາມາດໃນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21.

ຈາກຂໍ້ມູນໃນການສຶກສາສະພາບປັດຈຸບັນ ແລະ ຄວາມຕ້ອງການຈໍາເປັນໃນການຝຶກອົບຮົມເພື່ອສົ່ງເສີມການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ສາມາດນໍາມາສູ່ການອອກແບບຫຼັກສູດຝຶກອົບຮົມ ເຊິ່ງປະກອບດ້ວຍ: ຄວາມເປັນມາ ແລະ ຄວາມສໍາຄັນຂອງຫຼັກສູດ, ຫຼັກການຂອງຫຼັກສູດ, ເປົ້າໝາຍຂອງຫຼັກສູດ, ວັດຖຸປະສົງຂອງຫຼັກສູດ, ເນື້ອໃນ ແລະ ໂຄງສ້າງຂອງຫຼັກສູດ, ສື່ ແລະ ອຸປະ ກອນປະກອບການຝຶກອົບຮົມ, ການວັດ ແລະ ປະເມີນຜົນການຝຶກອົບຮົມ (ຂໍ້ມູນສະແດງໃນພາກຜະໜວກ ຕາຕະລາງທີ 2 ແລະ ພົບວ່າ: ຄວາມສອດຄ່ອງຂອງຫຼັກສູດຝຶກອົບຮົມຈາກຜູ້ຊ່ຽວຊານຈໍານວນ 5 ທ່ານ ໂດຍພາບລວມມີຄວາມສອດຄ່ອງ ມີຄ່າສະເລ່ຍລວມເທົ່າກັບ 0.85 ເມື່ອພິຈາລະນາແຕ່ລະດ້ານລ້ວນແຕ່ມີຄວາມສອດຄ່ອງທັງໝົດທຸກດ້ານ ເຊິ່ງມີຄ່າດັດສະນີຄວາມສອດຄ່ອງລະຫວ່າງ 0.60 ເຖິງ 1.00. ໃນຂະ ນະທີ່ຫຼັກສູດຝຶກອົບຮົມມີຄວາມເໝາະສົມຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າສະເລ່ຍລວມ 4.63. ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າຢູ່ໃນລະດັບຫຼາຍທຸກດ້ານຍົກເວັ້ນດ້ານໂຄງສ້າງຫຼັກສູດຝຶກອົບຮົມພຽງດ້ານດຽວທີ່ຢູ່ໃນລະດັບຫຼາຍ ແລະ ເມື່ອລຽງລໍາດັບຈາກຫຼາຍໄປຫາໜ້ອຍ ໄດ້ແກ່ອັນດັບທີ 1 ແມ່ນດ້ານດ້ານຫຼັກການຂອງຫຼັກສູດ, ຮອງລົງມາແມ່ນດ້ານເປົ້າໝາຍຂອງຫຼັກສູດ ແລະ ການວັດ ແລະ ປະເມີນຜົນການຝຶກອົບຮົມຕາມລໍາດັບ. (ຂໍ້ມູນສະແດງໃນຕາຕະລາງທີ 3 ແລະ 4)

3.3 ປະສິດທິຜົນຂອງຫຼັກສູດຝຶກອົບຮົມຫຼັງການທົດລອງໃຊ້ຫຼັກສູດ ພົບວ່າ:

1) ດ້ານຄວາມຮູ້ຄວາມເຂົ້າໃຈກ່ຽວກັບການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ຂອງຜູ້ເຂົ້າຝຶກອົບຮົມກ່ອນ ການຝຶກອົບຮົມ ມີຄ່າສະເລ່ຍ 11.15 ແລະ ຫຼັງການຝຶກອົບຮົມມີຄ່າສະເລ່ຍ 17.38. ເມື່ອທົດສອບດ້ວຍຄ່າທີ ໄດ້ຄ່າ T = 23.68 ແລະ ຄ່າ sig = .00 ເຊິ່ງນ້ອຍກວ່າຄ່າທົດສອບ P-value (0.05), ສະແດງວ່າ ຄວາມຮູ້ຄວາມເຂົ້າໃຈກ່ອນ ແລະ ຫຼັງການຝຶກອົບຮົມມີຄວາມແຕກຕ່າງກັນທີ່ລະດັບຄວາມສໍາຄັນ 0.05 ໂດຍມີຄະແນນຫຼັງການຝຶກອົບຮົມ (17.38) ສູງກວ່າກ່ອນການຝຶກອົບຮົມ (11.15). (ຂໍ້ມູນສະແດງໃນຕາຕະລາງທີ 5)

2) ດ້ານຄວາມສາມາດໃນການອອກແບບແຜນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ໂດຍພາບລວມຢູ່ໃນລະດັບດີ ມີຄ່າສະເລ່ຍເທົ່າກັບ 4.07 ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.45. ເມື່ອພິຈາລະນາແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບດີ ໂດຍດ້ານການການກໍານົດຈຸດປະສົງການຮຽນການສອນຢູ່ໃນລະດັບດີທີ່ສູງສຸດ, ຮອງລົງມາແມ່ນດ້ານການວັດ ແລະ ປະເມີນຜົນ ແລະ ດ້ານການກໍານົດເນື້ອໃນການຮຽນການສອນ ຕາມລໍາດັບ (ຂໍ້ມູນສະແດງໃນ ຕາຕະລາງທີ 6)

3) ຜູ້ເຂົ້າຝຶກອົບຮົມມີຄວາມເພິ່ງພໍໃຈຕໍ່ການຝຶກອົບຮົມໂດຍພາບລວມຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.14 ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.51. ເມື່ອພິຈາລະນາແຕ່ລະດ້ານເຫັນວ່າດ້ານເນື້ອໃນການຝຶກອົບຮົມມີຄວາມເພິ່ງພໍໃນໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນດ້ານການບໍລິການ ແລະ ດ້ານດ້ານການນໍາຄວາມຮູ້ໄປໃຊ້ ຕາມລໍາດັບ; ໃນຂະ ນະທີ່ດ້ານໄລຍະເວລາການຝຶກອົບຮົມຢູ່ໃນລະດັບປານກາງພຽງດ້ານດຽວ (ຂໍ້ມູນສະແດງໃນຕາຕະລາງທີ 7)

## 4. ວິພາກຜົນຮັບ

4.1 ຜົນການສຶກສາຄວາມຕ້ອງການຈໍາເປັນໃນການຝຶກອົບຮົມກ່ຽວກັບທັກສະແຫ່ງສະຕະວັດທີ 21 ໂດຍພາບລວມຢູ່

ໃນລະດັບຫຼາຍ; ທັງດ້ານວິທີການອອກແບບແຜນການຈັດການຮຽນການສອນ, ດ້ານການສອດແຊກກ່ຽວກັບການອະນຸລັກຄ່ານິຍົມທີ່ດີຂອງສັງຄົມ ແລະ ວັດທະນະທຳໃນການຈັດການຮຽນການສອນ ແລະດ້ານການອອກແບບກິດຈະກຳ ແລະການຈັດປະສົບການຮຽນຮູ້ ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ ທຽມຈັນ ພານິດຜະລິນໄຊ (2017) ທີ່ໄດ້ສຶກສາສະມັດຖະນະການຈັດການຮຽນການສອນໃນສະຕະວັດທີ 21 ຂອງຄູໃນ ຄະນະສຶກສາສາດ ມະຫາວິທະຍາໄລນະເຣສວນ ພົບວ່າຄູສອນມີຄວາມຕ້ອງການຈຳເປັນໃນການຈັດການຮຽນການສອນ 7 ດ້ານ ໄດ້ແກ່ ການອອກແບບການຈັດການຮຽນການສອນ, ການຈັດກິດຈະກຳການຮຽນທີ່ເນັ້ນຜູ້ຮຽນເປັນສຳຄັນ, ການພັດທະນາການຮຽນຮູ້ຂອງນັກຮຽນໃນຍຸກໃໝ່, ການພັດທະນາສະພາບແວດລ້ອມ ແລະແຫຼ່ງການຮຽນຮູ້ຍຸກໃໝ່, ການພັດທະນາ ແລະ ການໃຊ້ສື່-ນະວັດຕະກຳ ແລະ ເທັກໂນໂລຍີທາງການສຶກສາ, ການພັດທະນາເຄືອຂ່າຍການຮຽນຮູ້ ແລະ ວິທີການວັດ-ປະເມີນຜົນການຮຽນຮູ້ຂອງຜູ້ຮຽນໃນສະຕະວັດທີ 21 ແລະ ສອດຄ່ອງກັບຜົນການການປະເມີນຄວາມຕ້ອງການຈຳເປັນໃນການຝຶກອົບຮົມກ່ຽວກັບການອອກແບບການຈັດການຮຽນການສອນສຳລັບຄູອະຊີວະສຶກສາສາຂາຊ່າງອຸດສາຫະກຳ ໃນ ສປປ ລາວ ຂອງ ສາຍພິນ ຫຼວງພົນ, ບັນດິດ ສຸກສະຫວັດ ແລະ ໄພໂລດ ສະຖິລະຍາກອນ (ພສ. 2562) ທີ່ພົບວ່າ 3 ລຳດັບທາອິດທີ່ຄູອາຊີວະສຶກສາຕ້ອງການໃນການຝຶກອົບຮົມຄື: ການອອກແບບສື່ການຮຽນການສອນ, ຮອງລົງມາແມ່ນການວິເຄາະຫຼັກສູດ ແລະ ວິທີການສອນແບບໃໝ່ ເຊິ່ງມີຄ່າດັດສະນີຄວາມຕ້ອງການຈຳເປັນຢູ່ລະຫວ່າງ 0.44 - 0.57 ແລະ ຜົນທີ່ໄດ້ຮັບນຳໄປໃຊ້ໃນການອອກແບບຫຼັກສູດຝຶກອົບຄູອະຊີວະສຶກສາສາຂາຊ່າງອຸດສາຫະກຳຕໍ່ໄປ.

4.2 ການພັດທະນາຫຼັກສູດຝຶກອົບຮົມເຫັນວ່າຫຼັກສູດຝຶກອົບຮົມມີຄຸນນະພາບທັງທາງດ້ານຄວາມສອດຄ່ອງ ແລະຄວາມເໝາະສົມຢູ່ໃນລະດັບຫຼາຍເນື່ອງຈາກວ່າຫຼັກສູດດັ່ງກ່າວໄດ້ດຳເນີນການອອກແບບ ຕາມທິດສະດີຂອງຂະບວນກການພັດທະນາຫຼັກສູດ ເລີ່ມຕັ້ງແຕ່ການສຶກສາສະພາບປັດຈຸບັນ ແລະສຶກສາຫາຄວາມຕ້ອງການຈຳເປັນຂອງກຸ່ມເປົ້າໝາຍ ແລະ ການອອກແບບແມ່ນໄດ້ອີງໃສ່ທິດສະດີໃນການເບິ່ງໃສ່ພຶດຕິກຳຕົວຈິງກໍຄືຂໍ້ມູນທີ່ໄດ້ຮັບເປັນຂໍ້ມູນແຫ່ງຄວາມຕ້ອງການຈຳເປັນຕົວຈິງຂອງອາຈານສອນມາເປັນພື້ນຖານການອອກແບບຫຼັກສູດເພື່ອໃຫ້ຜູ້ຊ່ຽວຊານປະເມີນຄວາມສອດຄ່ອງ ແລະ ຄວາມເໝາະສົມ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ກຸນລະປະພັດ ສິງບູລະອຸດົມ (ພສ. 2551) ທີ່ສຶກສາຄວາມຕ້ອງການເພື່ອການພັດທະນາຫຼັກສູດຝຶກອົບຮົມເລື່ອງການບໍລິຫານຈັດການການທ່ອງທ່ຽວສຳລັບອົງກອນປົກຄອງທ້ອງຖິ່ນ, ຜົນການຄົ້ນຄວ້າພົບວ່າ: ກຸ່ມຕົວຢ່າງມີຄວາມຕ້ອງການຈຳເປັນຢູ່ໃນລະດັບຫຼາຍ ແລະຜົນການປະເມີນຫຼັກສູດຈາກຜູ້ຊ່ຽວຊານເຫັນວ່າມີຄວາມສອດຄ່ອງ ແລະ ເໝາະສົມໃນລະດັບທີ່ຈະນຳໄປໃຊ້ໃນການຝຶກອົບຮົມໃຫ້ກັບບຸກຄະລາກອນອົງການປົກຄອງທ້ອງຖິ່ນຕໍ່ໄປໄດ້.

4.3 ປະສິດທິຜົນຂອງການທົດລອງໃຊ້ຫຼັກສູດຝຶກອົບຮົມພົບວ່າ: ຜົນການຝຶກອົບຮົມກ່ອນ ແລະ ຫຼັງມີຄວາມແຕກຕ່າງກັນ, ຄວາມສາມາດໃນການອອກແບບແຜນການຈັດການຮຽນການສອນຢູ່ໃນລະດັບດີ ແລະ ຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ນັ້ນກໍເພາະວ່າການຝຶກອົບຮົມຄັ້ງນີ້ເປັນການຈັດຝຶກອົບຮົມທີ່ຫຼາກຫຼາຍທັງດ້ານກິດຈະກຳມີຄວາມເໝາະສົມກັບຄວາມຕ້ອງການ, ວິທີການຝຶກອົບຮົມເຂົ້າກັບສະພາບສະຖານະການປັດຈຸບັນໂດຍສະເພາະແມ່ນຄວາມສາມາດຂອງວິທະຍາກອນໃນການໝູນໃຊ້ລະບົບອອນລາຍເພື່ອດຳເນີນການໄດ້ເປັນຢ່າງດີ ແລະ ຄ່ອງແຄ້ວເຊິ່ງເປັນລະບົບທີ່ກຳລັງໄດ້ຮັບຄວາມນິຍົມໃນປັດຈຸບັນ, ອີກດ້ານໜຶ່ງຜູ້ເຂົ້າຝຶກອົບຮົມມີຄວາມຕັ້ງໃຈຢ່າງແທ້ຈິງໃນການສະແຫວງຫາຄວາມຮູ້ ຈິ່ງສາມາດເຂົ້າໃຈໃນວິທີການຢ່າງທ່ອງແທ້ ເຊິ່ງຜົນການຄົ້ນຄວ້ານີ້ສອດຄ່ອງກັບຜົນການຄົ້ນຄວ້າຂອງ ໄກລາວັນ ຊິນຕະຕັງຕິໂຍ ແລະ ຄະນະ (ພສ.2562) ທີ່ຄົ້ນຄວ້າກ່ຽວກັບການວິໄຈ ແລະ ພັດທະນາຫຼັກສູດຝຶກອົບຮົມພຣະວິທະຍາກອນຂະບວນທຳມະ; ຜົນການຄົ້ນຄວ້າພົບວ່າ: ຜູ້ເຂົ້າຝຶກອົບຮົມມີຄວາມຮູ້ຄວາມເຂົ້າໃຈສູງກວ່າກ່ອນການຝຶກອົບຮົມ , ການປະເມີນຜົນການດຳເນີນກິດຈະກຳລະຫວ່າງຝຶກອົບຮົມຢູ່ໃນລະດັບຫຼາຍ ແລະ ມີຄວາມເພິ່ງພໍໃຈຕໍ່ການຝຶກອົບຮົມໃນລະດັບຫຼາຍ.

ນອກຈາກນີ້, ຈາກຄວາມຄິດເຫັນຂອງຜູ້ເຂົ້າຝຶກອົບຮົມເຫັນວ່າມີປະສິດທິພາບເໝາະສົມ, ມີການຮຽນຮູ້ທີ່ຫຼາກຫຼາຍ, ມີເກນການປະເມີນທີ່ຊັດເຈນ ແລະ ສາມາດນຳຄວາມຮູ້ໄປໃຊ້ໄດ້ຈິງ, ແຕ່ຄວນເພີ່ມເວລາໃນການຝຶກອົບຮົມຂຶ້ນຕື່ມ ແລະ ຄວນຜັນຂະຫຍາຍແນວທາງນີ້ສູ່ຜູ້ບໍລິຫານໃຫ້ເຊື່ອມຊຶມ ແລະ ເຂົ້າໃຈໃນການສະໜັບສະໜູນຜູ້ສອນຢ່າງເຕັມສັກກະຍະພາບ ແລະຄວນລົງນິເທດ - ຕິດຕາມຜູ້ເຂົ້າຝຶກອົບຮົມຕໍ່ໄປ.

**5. ສະຫຼຸບຜົນ**

ການຄົ້ນຄວ້າ ຄວາມທ້າທາຍໃນການຝຶກອົບຮົມເພື່ອສົ່ງເສີມຄວາມສາມາດໃນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ໃນສະຖານະການວິຖີຊີວິດແບບໃໝ່ ສາມາດສະຫຼຸບໄດ້ວ່າ:

5.1 ສະພາບຄວາມຕ້ອງການຈຳເປັນໃນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ຢູ່ໃນລະດັບຫຼາຍ.

5.2 ຫຼັກສູດຝຶກອົບຮົມທີ່ພັດທະນາຂຶ້ນມີຄວາມສອດຄ່ອງ ແລະ ເໝາະສົມຫຼາຍ ສາມາດນຳໄປໃຊ້ໃນການຝຶກອົບຮົມໄດ້ຈິງ.

5.3 ປະສິດທິຜົນຂອງຫຼັກສູດແມ່ນ ຜູ້ເຂົ້າຝຶກອົບຮົມມີຄວາມຮູ້ຄວາມເຂົ້າໃຈຫຼັງຝຶກອົບຮົມສູງກວ່າກ່ອນຝຶກອົບຮົມ, ຄວາມສາມາດໃນການອອກແບບການຈັດການຮຍນການສອນທັກສະແຫ່ງສະຕະວັດທີ 21 ໃນລະດັບດີ ແລະ ມີຄວາມເພິ່ງພໍໃຈໃນລະດັບຫຼາຍ.

ສຳລັບສິ່ງທ້າທາຍທີ່ຄົ້ນພົບຈາກຂະບວນການໃນຄົ້ນຄວ້າຄັ້ງນີ້ ໄດ້ແກ່:

1) ເປັນຄວາມຮູ້ໃໝ່ ແລະ ວິທີການໃໝ່ສຳລັບອາຈານສອນ, ທາງດ້ານລະດັບຄວາມຮູ້ຂອງຜູ້ເຂົ້າຝຶກອົບຮົມຍັງບໍ່ທັນເລິກເຊິ່ງ.

2) ການປ່ຽນແປງສູ່ການຮຽນການສອນໃນສະຕະວັດທີ 21 ເປົ້າໝາຍທີ່ສຳຄັນຄືການຮຽນຮູ້ຂອງຜູ້ຮຽນ ແລະ ການປະຕິບັດການສອນຂອງຄູສຳລັບສະຕະວັດທີ 21 ທີ່ມີຄຸນນະພາບສູງນຳໄປສູ່ຄຸນລັກສະນະຂອງຜູ້ຮຽນທີ່ປະສົບຜົນສຳເລັດໃນການຮຽນ ແລະ ເປັນລາຍບຸກຄົນທີ່ປະສົບຜົນສຳເລັດໃນການເຮັດວຽກ ແລະ ມີຄວາມສຸກໃນສັງຄົມສຳລັບສະຕະວັດທີ 21 ໃນອະນາຄົດ ໂດຍທີ່:

- ບຸກຄົນທີ່ມີຄວາມໝັ້ນໃຈໃນຕົນເອງ, ໃສ່ໃຈວ່າສິ່ງໃດຖືກຕ້ອງ ແລະ ສິ່ງໃດຜິດ, ສາມາດປັບຕົວ ແລະ ຮູ້ຈັກຕົນເອງ, ຄິດຢ່າງມີອິດສະຫຼະ ແລະ ຢ່າງມີວິຈາລະນະຍານ ແລະ ສື່ສານອອກມາຢ່າງມີປະສິດທິຜົນ.

- ບຸກຄົນທີ່ຮຽນຮູ້ດ້ວຍຕົນເອງ, ມີຄວາມອິດທົນພາກພຽນ ແລະ ຮັບຜິດຊອບຕໍ່ການຮຽນຮູ້ຂອງຕົນເອງ.

- ເປັນບຸກຄົນທີ່ສາມາດເຮັດວຽກຮ່ວມກັບຜູ້ອື່ນຢ່າງມີປະສິດທິຜົນ, ສ້າງສັນ, ກ້າສ່ຽງດ້ວຍຄວາມພະຍາຍາມ ແລະ ສູ້ເພື່ອຄວາມເປັນເລີດ.

3) ການປ່ຽນແປງໂດຍພາບລວມສູ່ການຮຽນຮູ້ຂອງສະຖາບັນສູ່ການຮຽນການສອນສຳລັບສະຕະວັດທີ 21 ຄວນມີ: ການປະຕິຮູບສະຖານສຶກສາສຳລັບການຮຽນການສອນໃນສະຕະວັດທີ 21, ສົ່ງເສີມອາຈານ ແລະ ຜູ້ຮຽນໃຫ້ເກີດທັກສະການຮຽນການສອນໃນສະຕະວັດທີ 21, ປັບປຸງເທັກໂນໂລຍີ ແລະ ສິ່ງແວດລ້ອມສຳລັບການຮຽນການສອນໃນສະຕະວັດທີ 21 ແລະ ແນວທາງການສອນ ແລະ ປະເມີນຜົນການຮຽນການສອນໃນສະຕະວັດທີ 21.

4) ເປົ້າໝາຍຂອງການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ໃນສະຖານະການວິກິດຊີວິດແບບໃໝ່ທີ່ ຄູ, ອາຈານ ແລະ ນັກສຶກສາໃນ ສປປ ລາວ ພວກເຮົາຄວນກຽມພ້ອມນັ້ນສາມາດສະຫຼຸບໄດ້ດັ່ງແຜນພາບທີ 2.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄຳຂອບໃຈ

ຂໍຂອບໃຈມາຍັງ ສາຂາຫຼັກສູດ ແລະ ການສອນ ຄະນະສຶກສາສາດ ມະຫາວິທະຍາໄລຂອນແກ່ນ ທີ່ໄດ້ອະນຸມັດ ແລະ ສະໜັບສະໜູນງົບປະມານພາຍໃຕ້ໂຄງການພັດທະນາຫຼັກສູດໄລຍະສັ້ນ Up-Skills & Re-Skills for Teacher ເຊິ່ງເປັນງົບປະມານປະຈຳປີ 2020 ໃນການສະໜັບສະໜູນຫຼັກໃນການຄົ້ນຄວ້າຄັ້ງນີ້.

## 8. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2015). **ວິໄສທັດຮອດປີ 2030 ຍຸດທະສາດ ຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີຄັ້ງທີ VIII (2016-2020)**. ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ໄກລາວັນ ຊິນທະຕັງຕິໂຍ ແລະ ຄະນະ. (ພສ. 2560). ການວິໄຈ ແລະ ພັດທະນາຫຼັກສູດຝຶກອົບຮົມພຣະວິທະ ຍາກອນຂະບວນທຳ. **ວາລະສານສັນຕິສຶກສາປະລິທັດ.** 1 (ສະບັບເພີ່ມເຕີມ), 282 - 297.

ຈະຕຸພູມ ເຂດຈະຕຸຈັກ. (ພສ. 2562). **ການວິໄຈຊັ້ນຮຽນ: ຂະບວນການສ້າງຄວາມຮູ້ເພື່ອໃຊ້ພັດທະນາການຮຽນການສອນ.** ຂອນແກ່ນ: ຄະນະສຶກສາສາດ ມະຫາວິທະຍາໄລຂອນແກ່ນ.

ຈັນທິມາ ແສງເລີດອຸໄທ. (ພສ. 2553). **ການວິໄຈທາງການສຶກສາ.** ຄະນະຄຣຸສາດມະຫາວິທະຍາໄລຣາຊະພັດນະຄອນປະຖົມ.

ສຸວິມົນ ວ່ອງວານິດ. (ພສ. 2555). **ການວິໄຈປະເມີນຄວາມຕ້ອງການຈຳເປັນ (ພິມຄັ້ງທີ 2).** ກຸງເທບ: ສຳນັກພິມ

ແຫ່ງຈຸລາລົງກອນມະຫາວິທະຍາໄລ.

ສາຍພິນ ຫຼວງພິນ, ບັນດິດ ສຸກສະຫວັດ ແລະ ໄພໂລດ ສະຖິລະຍະກອນ. (ພສ. 2562). ການປະເມີນຄວາມຕ້ອງການຈຳເປັນໃນການຝຶກອົບຮົມກ່ຽວກັບການອອກແບບການຮຽນການສອນສຳລັບຄູອາຊີວະສຶກສາ ສາຂາວິຊາຊ່າງອຸດສາຫະກຳໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. **ວາລະສານວິຊາການສິລະປະສາດປະຍຸກ,** 12(2), 59-66.

ສູນວິໄຈການສຶກສາ ແລະ ກິລາ. (2014). **ບົດລາຍງານການຄົ້ນຄວ້າວິໄຈກ່ຽວກັບສະຖານະພາບ ແລະ ການພັດທະນາວິຊາຊີບຂອງຜູ້ປະຕິບັດງານດ້ານການສຶກສາກ່ອນໄວຮຽນ.** ນະຄອນຫຼວງວຽງຈັນ: ໂຮງພິມສຶກສາທິການ ແລະ ກິລາ.

ສັນ ສູນກາງ. (ພສ.2551). **ການພັດທະນາຫຼັກສູດຝຶກອົບຮົມເສີມສ້າງທັກສະການປະຕິບັດວິຊາຊີບເພື່ອພັດທະນາຜູ້ຮຽນແບບອົງລວມສຳລັບຄູລະດັບການສຶກສາຂັ້ນພື້ນຖານ.** ວິທະຍານິພົນປະລິນຍາດຸດສະດີບັນດິດ ສາຂາວິໄຈ ແລະ ພັດທະນາຫຼັກສູດ, ມະຫາວິທະຍາໄລສີນະຄະລິນວິໂລດ.

ທຽມຈັນ ພານິດຜະລິນໄຊ. (2017). ການສຶກສາສະມັດຖະນະການຈັດການຮຽນການສອນໃນສະຕະວັດທີ 21 ຂອງນິສິດລະດັບປະລິນຍາຕີໃນໂຄງການສຶກສາເພື່ອພັດທະນາຄູໃນທ້ອງຖິ່ນທຸລະກັນດານໃນເຂດພື້ນທີ່ຊາຍແດນໄທ - ມຽນມາ. **ວາລະສານສຶກສາສາດມະຫາວິທະຍາໄລນະເລສວນ.** 19(4), 123-132.

ນະລິນີ ພານສາຍຕາ ແລະ ປະອະນາຄາໄຊ. (ພສ. 2562). ຄວາມຕ້ອງການໃນການຝຶກອົບຮົມ ແລະ ຄວາມຄາດຫວັງຕໍ່ຄວາມກ້າວໜ້າໃນສາຍອາຊີບຂອງບຸກຄະລາກອນສາຍສະໜັບສະໜູນວິທະຍາໄລດຸສິດທານີ. **ວາລະສານວິທະຍາໄລດຸສິດທານີ**, 11(2), 202-219.

ບຸນຊົມ ສີສະອາດ. (ພສ. 2553). **ການວິໄຈເບື້ອງຕົ້ນ (ພິມຄັ້ງທີ 8) ສະບັບປັບປຸງໃໝ່.** ກຸງເທບ: ສຸວິຣິຍະສາດ ຈຳກັດ.

ມະຫາວິທະຍາໄລສຸພານຸວົງ. (2019). **ບົດສະຫຼຸບປະຈຳປີສົກສຶກສາ 2018-2019.** ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

Creswell, J. W.(2011). **Mixed methods designs**. London: Sage publications Ltd. harcourt, brace & world.

Cohen, L., Manion, L., & Morrison, K (2007). **Research methods in education (sixth edition)**. London: Routedge Tylor & Francis Group.

## ເອກະສານຊ້ອນທ້າຍ

ຕາຕະລາງທີ 1 ຜົນການສຶກສາຂໍ້ມູນພື້ນຖານກ່ຽວກັບການຈັດການຮຽນສອນ ແລະ ຄວາມຕ້ອງການຈຳເປັນໃນການຝຶກອົບຮົມກ່ຽວກັບການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21

| ເນື້ອໃນລາຍການ | ສະພາບປັດຈຸບັນ (D) | ຄວາມຕ້ອງການຈຳເປັນ (I) | ດັດສະນີຄວາມຕ້ອງການຈຳເປັນ ($PNI_{modified}$) $PNI_{modified}=\frac{I-D}{I}$ | ຈັດລຳດັບ |
|---|---|---|---|---|
| 1. ດ້ານວິທີການອອກແບບແຜນການຈັດການຮຽນການສອນ | 2.91 | 4.60 | 0.58 | 1 |
| 2. ດ້ານການຈັດບັນຍາກາດໃນຫ້ອງຮຽນ | 3.14 | 4.28 | 0.36 | 5 |
| 3. ດ້ານການອອກແບບກິດຈະກຳ ແລະ ການຈັດປະສົບການຮຽນຮູ້ | 3.19 | 4.80 | 0.50 | 3 |
| 4. ຄວາມຮັບຜິດຊອບຕໍ່ຄວາມກ້າວໜ້າໃນວິຊາຊີບ ແລະ ສັງຄົມ | 2.81 | 3.96 | 0.41 | 4 |
| 5. ການສອດແຊກກ່ຽວກັບການອະນຸລັກຄ່ານິຍົມທີ່ດີຂອງສັງຄົມ ແລະ ວັດທະນະ | 2.63 | 4.09 | 0.56 | 2 |

| | | | | |
|---|---|---|---|---|
| ທຳໃນການຈັດການຮຽນການສອນ | | | | |
| **ສະເລ່ຍລວມ** | 2.93 | 4.34 | 0.48 | |

ຕາຕະລາງທີ 2 ເນື້ອໃນ ແລະ ໂຄງສ້າງຂອງຫຼັກສູດຝຶກອົບຮົມ

| **ຫົວຂໍ້ທີ່** | **ເນື້ອໃນ** | **ເວລາ (ຊົ່ວໂມງ)** |
|---|---|---|
| 1 | ກອບຄວາມຄິດ ແລະ ວິທີການອອກແບບແຜນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 | 3 |
| 2 | ການສອດແຊກກ່ຽວກັບການອະນຸລັກຄ່ານິຍົມທີ່ດີຂອງສັງຄົມ ແລະ ວັດທະນະທຳໃນການຈັດການຮຽນການສອນ ແລະ ຄວາມຮັບຜິດຊອບຕໍ່ຄວາມກ້າວໜ້າໃນວິຊາຊີບ ແລະ ສັງຄົມ | 3 |
| 3 | ແນວທາງ ແລະ ວິທະຍາການອອກແບບກິດຈະກຳ ແລະ ການຈັດປະສົບການຮຽນຮູ້ທັກສະແຫ່ງສະຕະວັດທີ 21 | 3 |
| 4 | ແນວທາງການວັດ ແລະ ປະເມີນຜົນການຮຽນການສອນທັກສະແຫ່ງສະຕະວັດທີ 21 | 3 |
| 5 | ການບູລະນາການທັກສະແຫ່ງສະຕະວັດທີ 21 ເຂົ້າໃນແຜນວິໄສທັດ ປີ 2030 ແຜນຍຸດທະສາດການສຶກສາແຫ່ງຊາດ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021 - 2025) | 2 |
| 6 | ຝຶກປະຕິບັດການອອກແບບການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ຕາມສາຂາວິຊາຕ່າງໆ | 4 |
| **ລວມທັງໝົດ** | | 18 |

ຕາຕະລາງທີ 3 ຜົນການກວດສອບຄວາມສອດຄ່ອງຂອງຫຼັກສູດຝຶກອົບຮົມ

| **ລາຍການປະເມີນ** | **ຜົນລວມ** | **IOC** | **ແປຜົນ** |
|---|---|---|---|
| 1. ຄວາມເປັນມາ ແລະ ຄວາມສຳຄັນ ກັບ ຫຼັກການຂອງຫຼັກສູດ | 4 | 0.60 | ສອດຄ່ອງ |
| 2. ຄວາມເປັນມາ ແລະ ຄວາມສຳຄັນ ກັບ ເປົ້າໝາຍຂອງຫຼັກສູດ | 3 | 0.60 | ສອດຄ່ອງ |
| 3. ຄວາມເປັນມາ ແລະ ຄວາມສຳຄັນ ກັບ ວັດຖຸປະສົງຂອງຫຼັກສູດ | 4 | 0.80 | ສອດຄ່ອງ |
| 4. ຫຼັກການ ກັບ ວັດຖຸປະສົງຂອງຫຼັກສູດ | 3 | 0.60 | ສອດຄ່ອງ |
| 5. ຫຼັກການ ກັບ ເນື້ອໃນຂອງຫຼັກສູດ | 4 | 0.80 | ສອດຄ່ອງ |
| 6. ຫຼັກການ ກັບ ກິດຈະກຳການຝຶກອົບຮົມ | 5 | 1.00 | ສອດຄ່ອງ |
| 7. ຫຼັກການ ກັບ ວິທີການວັດ ແລະ ປະເມີນຜົນຂອງຫຼັກສູດ | 4 | 0.80 | ສອດຄ່ອງ |
| 8. ເປົ້າໝາຍ ກັບ ວັດຖຸປະສົງຂອງຫຼັກສູດ | 5 | 1.00 | ສອດຄ່ອງ |
| 9. ວັດຖຸປະສົງ ກັບ ເປົ້າໝາຍຂອງຫຼັກສູດ | 5 | 1.00 | ສອດຄ່ອງ |
| 10. ວັດຖຸປະສົງ ກັບ ກິດຈະກຳການຝຶກອົບຮົມ | 5 | 1.00 | ສອດຄ່ອງ |
| 11. ວັດຖຸປະສົງ ກັບ ວິທີການວັດ ແລະ ປະເມີນຜົນຂອງຫຼັກສູດ | 5 | 1.00 | ສອດຄ່ອງ |
| 12. ເນື້ອໃນ ກັບ ກິດຈະກຳການຝຶກອົບຮົມ | 4 | 0.80 | ສອດຄ່ອງ |
| 13. ກິດຈະກຳ ກັບ ວິທີການວັດ ແລະ ປະເມີນຜົນຂອງຫຼັກສູດ | 3 | 0.60 | ສອດຄ່ອງ |
| ສະເລ່ຍລວມ (IOC) | | 0.85 | ສອດຄ່ອງ |

ຕາຕະລາງທີ 4 ຜົນການກວດສອບຄວາມເໝາະສົມຂອງຫຼັກສູດຝຶກອົບຮົມ

| **ຂໍ້ທີ** | **ລາຍການປະເມີນ** | $\overline{X}$ | *S.D* | **ແປຜົນ** |
|---|---|---|---|---|
| 1 | ດ້ານຄວາມເປັນມາ ແລະ ຄວາມສຳຄັນ | 4.53 | 0.52 | ຫຼາຍທີ່ສຸດ |
| 2 | ດ້ານຫຼັກການ | 4.93 | 0.26 | ຫຼາຍທີ່ສຸດ |
| 3 | ດ້ານເປົ້າໝາຍມີຄວາມຊັດເຈນ | 4.80 | 0.55 | ຫຼາຍທີ່ສຸດ |
| 4 | ດ້ານວັດຖຸປະສົງຂອງຫຼັກສູດ | 4.67 | 0.49 | ຫຼາຍທີ່ສຸດ |
| 5 | ດ້ານໂຄງສ້າງຫຼັກສູດ | 4.20 | 0.77 | ຫຼາຍ |
| 6 | ເນື້ອໃນການຝຶກອົບຮົມ | 4.50 | 0.61 | ຫຼາຍທີ່ສຸດ |
| 7 | ກິດຈະກຳການຝຶກອົບຮົມ | 4.70 | 0.66 | ຫຼາຍທີ່ສຸດ |
| 8 | ສື່ ແລະ ອຸປະກອນປະກອບການຝຶກອົບຮົມ | 4.60 | 0.74 | ຫຼາຍທີ່ສຸດ |
| 9 | ການວັດ ແລະ ປະເມີນຜົນການຝຶກອົບຮົມ | 4.73 | 0.45 | ຫຼາຍທີ່ສຸດ |
| ສະເລ່ຍລວມ | | 4.63 | 0.16 | ຫຼາຍທີ່ສຸດ |

ຕາຕະລາງທີ 5 ປະສິດທິຜົນຂອງການທົດລອງໃຊ້ຫຼັກສູດດ້ານຄວາມຮູ້ຄວາມເຂົ້າໃຈກ່ຽວກັບການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21

| **ຜົນການຝຶກອົບຮົມ** (ຄະແນນເຕັມ 20) | **n** | $\bar{x}$ | **S.D.** | **t** | **Sig** |
|---|---|---|---|---|---|
| ຫຼັງການຝຶກອົບຮົມ | 60 | 17.38 | 2.34 | 23.68** | .000 |
| ກ່ອນການຝຶກອົບຮົມ | 60 | 11.15 | 3.59 | | |

ຕາຕະລາງທີ 6 ປະສິດທິຜົນຂອງການທົດລອງໃຊ້ຫຼັກສູດດ້ານຄວາມສາມາດໃນການອອກແບບແຜນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21

| **ລາຍການປະເມີນ** | | $\bar{x}$ | **S.D** | ລະດັບຄຸນນະພາບ |
|---|---|---|---|---|
| 1 | ການກຳນົດຈຸດປະສົງການຮຽນການສອນ | 4.33 | 0.48 | ດີ |
| 2 | ການກຳນົດເນື້ອໃນການຮຽນການສອນ | 4.09 | 0.51 | ດີ |
| 3 | ກິດຈະກຳການຮຽນການສອນ | 3.95 | 0.55 | ດີ |
| 4 | ສື່ການຮຽນການສອນ | 3.80 | 0.62 | ດີ |
| 5 | ການວັດ ແລະ ປະເມີນຜົນ | 4.17 | 0.62 | ດີ |
| ສະເລ່ຍລວມ | | 4.07 | 0.45 | ດີ |

ຕາຕະລາງທີ 7 ປະສິດທິຜົນຂອງການທົດລອງໃຊ້ຫຼັກສູດດ້ານຄວາມເພິ່ງພໍໃຈຕໍ່ການຝຶກອົບຮົມ

| **ລາຍການປະເມີນ** | | $\overline{X}$ | **S.D** | **ລະດັບຄວາມເພິ່ງພໍໃຈ** |
|---|---|---|---|---|
| 1 | ດ້ານເນື້ອໃນການຝຶກອົບຮົມ | 4.50 | 0.37 | ຫຼາຍທີ່ສຸດ |
| 2 | ດ້ານກິດຈະກຳ/ສື່ການຝຶກອົບຮົມ | 4.03 | 0.37 | ຫຼາຍ |
| 3 | ດ້ານໄລຍະເວລາການຝຶກອົບຮົມ | 3.47 | 0.59 | ປານກາງ |
| 4 | ດ້ານວິທະຍາກອນ | 4.28 | 0.62 | ຫຼາຍ |
| 5 | ດ້ານການບໍລິການ | 4.43 | 0.64 | ຫຼາຍ |
| 6 | ດ້ານການນຳຄວາມຮູ້ໄປໃຊ້ | 4.40 | 0.65 | ຫຼາຍ |

| | | | |
|---|---|---|---|
| **ສະຫຼຸບລວມ** | 4.14 | 0.51 | ຫຼາຍ |




ແຜນວາດທີ 2 ເປົ້າໝາຍຂອງການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21
ໃນສະຖານະການວິຖີຊີວິດແບບສຳລັບຄູ, ອາຈານ ແລະ ນັກສຶກສາ ສປປ ລາວ